ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---===oo(000)oo===---

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1515---- /ອຄ.ກຂອ.

ນະຄອນຫລວງວຽງຈັນ, ວັນທີ 12 SEP 2008

# ຂໍ້ຕົກລົງ

## ຂອງລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະການຄ້າ ວ່າດ້ວຍການປະກາດນຳໃຊ້ລະບຽບການແຫຼ່ງກຳເນີດສິນຄ້າ ໃນກອບການ ຮ່ວມມື ເຂດການຄ້າເສລີລະຫວ່າງອາຊຽນ-ເກົາຫຼີ

- ອີງໃສ່ສັນຍາວ່າດ້ວຍການຄ້າດ້ານສິນຄ້າ ລະຫວ່າງອາຊຽນ ແລະ ເກົາຫຼີ ທີ່ໄດ້ຮັບການລົງນາມໃນເດືອນ ສິງຫາ ປີ 2006 ຊຶ່ງມີຜົນບັງຄັບໃຊ້ ໃນວັນທີ 01 ກໍລະກົດ 2007.
- ອີງໃສ່ມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວວ່າດ້ວຍ ການຕົກລົງໃຫ້ສັດຕະຍາບັນ ກ່ຽວກັບບັນຊີຫຼຸດຜ່ອນອັດຕາພາສີສິນຄ້າຂອງ ສປປ ລາວ ໃນຂອບການຮ່ວມມື ອາຊຽນ-ເກົາຫຼີ ສະບັບເລກທີ 47 /ສພຊ ລົງວັນທີ 03 ເມສາ 2008.
- ອີງໃສ່ແຈ້ງການຂອງສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1247/ຄລບ ລົງວັນທີ 14.07.2008 ກ່ຽວກັບການຈັດຕັ້ງປະຕິບັດສັນຍາການຫຼຸດຜ່ອນອັດຕາພາສີສິນຄ້າ ຂອງ ສປປ ລາວ ໃນຂອບການຮ່ວມມືດ້ານການຄ້າເສລີອາຊຽນ ສປ ຈີນ ແລະ ອາຊຽນ ສ ເກົາຫຼີ (Agreement on Trade in Goods)
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 188/ນຍ ລົງວັນທີ 17.08.2006 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະການຄ້າ.
- ອີງຕາມການສະເໜີຂອງກົມການນຳເຂົ້າ ແລະ ສົ່ງອອກ.

## ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ

ມາດຕາ 01: ປະກາດນຳໃຊ້ລະບຽບແຫຼ່ງກຳເນີດສິນຄ້າ ໃນກອບການຮ່ວມມື ເຂດການຄ້າເສລີ ລະຫວ່າງອາຊຽນ-ເກົາຫຼີ ຊຶ່ງໃນນັ້ນ ລວມທັງ ລະບຽບຂັ້ນຕອນການອອກໃບຢັ້ງຢືນແຫຼ່ງກຳເນີດ OCP ແລະ ລະບຽບແຫຼ່ງກຳ ເນີດສະເພາະທີ່ນຳໃຊ້ກັບແຕ່ລະຜະລິດຕະພັນPSR ເພື່ອຢັ້ງຢືນແຫຼ່ງກຳເນີດໃຫ້ແກ່ສິນຄ້າສົ່ງອອກ ຂອງ ສປປ ລາວ ໄປ ປະເທດ ອາຊຽນອື່ນ ແລະ ເກົາຫຼີ ໂດຍການນຳໃຊ້ແບບຟອມ AK.

ມາດຕາ 02: ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ຮັບຜິດຊອບ ແນະນຳ ແລະ ເຜີຍແຜ່ ວິທີຈັດຕັ້ງປະຕິບັດລະອຽດກ່ຽວກັບລະບຽບການດັ່ງກ່າວເພື່ອໃຫ້ຂໍ້ຕົກລົງສະບັບນີ້ ຖືກປະຕິບັດຢ່າງໄດ້ຮັບຜົນດີ.

ມາດຕາ 03: ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ ນັບແຕ່ ວັນທີ 01 ເດືອນ ຕຸລາ 2008 ເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະການຄ້າ

ດຣ. ນາມ ວິຍະເກດ